# ກະຊວງກະສິກຳ ແລະ ສິ່ງແວດລ້ອມ

**ໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ**

ເງິນກູ້ເລກທີ: IDA No.673580-LA ແລະ IDA No.73590-LA, ລະຫັດໂຄງການ. P178545

**ປະກາດຮັບສະໝັກພະນັກງານ** - Request for Expression of Interest (REOI)

ຕຳແໜ່ງ: **ພະນັກງານ ຮາກຖານບ້ານ ຮັບຜິດຊອບ ວຽກໂພຊະນາການ,**

**ຈຳນວນ 01 ຕຳແໜ່ງ (ຮັບຜິດຊອບ ບ້ານເປົ້າໝາຍຂອງໂຄງການ ຈຳນວນ 5-13 ບ້ານ)**

ບ່ອນປະຈຳການແມ່ນຫ້ອງການກຸ່ມບ້ານ ເປົ້າໝາຍ ຂອງໂຄງການ ປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ ເມືອງພູກູດ ແຂວງຊຽງຂວາງ.

1. ລັດຖະບານ ສປປ ລາວ ໄດ້ຮັບທຶນກູ້ຢືມ ຈາກສະມາຄົມພັດທະນາສາກົນ (IDA) ຂອງທະນາຄານໂລກ ເພື່ອຈັດຕັ້ງປະຕິບັດໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ ແລະ ມີຈຸດປະສົງທີ່ຈະນຳໃຊ້ທຶນສ່ວນໜຶ່ງ ເຂົ້າໃນການຮັບສະໝັກອາສາສະໝັກຂັ້ນບ້ານ ຮັບຜິດຊອບວຽກໂພຊະນາການ, ຈຳນວນ 01 ຕຳແໜ່ງ ເພື່ອມາປະຈຳຢູ່ຫ້ອງການກຸ່ມບ້ານ ທີ່ເມືອງພູກູດ ແຂວງຊຽງຂວາງ ດັ່ງນີ້:
2. ໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ ຂໍເຊີນຜູ້ທີ່ສົນໃຈ ທີ່ມີຄູນສົມບັດຄົບຖ້ວນຖືກຕ້ອງ ຕາມເງື່ອນໄຂ ທີ່ໄດ້ກຳນົດໄວ້ຂ້າງລຸ່ມ ***ຍື່ນເອກະສານສະໝັກດ້ວຍຕົນເອງ*** ທີ່ຫ້ອງການ ໂຄງການ ປຊກ ເມືອງພູກູດ ແຂວງຊຽງຂວາງ ຫລື ທາງອີເມວ ສົ່ງມາຕາມທີ່ຢູ່: **info.hr@clearlaos.org** ນີ້ພ້ອມເອກະສານຕ່າງໆທີ່ກ່ຽວຂ້ອງ ເພື່ອເປັນບ່ອນອ້າງອີງ ປະສົບການດ້ານຄວາມຮູ້, ຄວາມສາມາດ ແລະ ປະສົບການ ຂອງທ່ານ ເພື່ອມາຮັບຜິດຊອບເຮັດວຽກດັ່ງກ່າວ:

➢ ຂໍ້ກຳນົດເງື່ອນໄຂເບື້ອງຕົ້ນ ຂອງຜູ້ສະໝັກທີ່ສາມາດຍື່ນສະໝັກໄດ້ ປະກອບມີດັ່ງນີ້:

**1) ອາສາສະໝັກຂັ້ນບ້ານ ຮັບຜິດຊອບວຽກໂພຊະນາການ**

- ລະດັບທາງດ້ານການສຶກສາ: ຕ້ອງຮຽນຈົບຊັ້ນສູງຂຶ້ນໄປ ໃນສາຂາ ວິທະຍາສາດ ດ້ານສຸຂະພາບ / ການແພດ, ດ້ານໂພຊະນາການ, ດ້ານກະສິກຳ ແລະ ດ້ານການພັດທະນາຊຸມຊົນ;
- ຕ້ອງຮູ້ ແລະ ມີປະສົບການ ໃນວຽກງານການສົ່ງເສີມດ້ານໂພຊະນາການ ໃນເຂດຊົນນະບົດ ໂດຍເນັ້ນໃສ່ການປ່ຽນແປງພຶດຕິກຳທາງສັງຄົມ ແລະ ກິດຈະກຳການຜະລິດກະສິກຳ ຕິດພັນກັບໂພຊະນາການ ແລະ ການວາງແຜນແບບມີສ່ວນຮ່ວມໃນຊຸມຊົນ;
- ມີທັກສະ ທາງດ້ານການສື່ສານທາງສັງຄົມ, ການປະສານງານກັບອຳນາດການປົກຄອງທ້ອງຖິ່ນ, ເຮັດວຽກນຳແມ່ຍິງ ແລະ ຊົນເຜົ່າຕ່າງໆ;
- ມີທັກສະ ໃນການນຳໃຊ້ຄອມພິວເຕີຂັ້ນພື້ນຖານ;
- ຮູ້ພາສາທ້ອງຖິ່ນ (ພາສາຊົນເຜົ່າ) ຂອງບ້ານ ທີ່ຈະໄດ້ຮັບຜິດຊອບ ຈະເປັນການດີ;
- ສາມາດເດີນທາງໄປເຮັດວຽກ ແລະ ພັກເຊົາ ຢູ່ບ້ານເປົ້າໝາຍໂຄງການ ທີ່ຈະໄດ້ຮັບຜິດຊອບ;
- ຕ້ອງມີໃບອະນຸຍາດຂັບຂີ່ລົດຈັກ.

➢ ເອກະສານຍື່ນສະໝັກ ປະກອບມີ:

- ໃບຄຳຮ້ອງຍື່ນສະໝັກງານ
- ຊີວະປະຫວັດ: ໃຫ້ລະບຸລະອຽດ ຊື່ ແລະ ນາມສະກຸນ, ເບີໂທລະສັບທີ່ສາມາດຕິດຕໍ່ໄດ້, ອາຍຸ, ຕຳແໜ່ງທີ່ສະໝັກ, ສະຖານທີ່ ທີ່ສະເໜີເຂົ້າປະຈຳການ (ຊື່ເມືອງ, ແຂວງ) ແລະ ລາຍຊື່ ແລະ ເບີໂທ ຂອງຜູ້ສາມາດຢັ້ງຢືນຊີວະປະຫວັດຂອງທ່ານໄດ້ ຈຳນວນ 03 ທ່ານ ເພື່ອທາງໂຄງການສາມາດສອບຖາມໄດ້. ພ້ອມຮູບຖ່າຍຂອງຜູ້ສະໝັກ;
- ສຳເນົາເອກະສານຕ່າງໆທີ່ກ່ຽວຂ້ອງ ເຊັ່ນ: ໃບປະກາດຮຽນຈົບ, ໃບຜ່ານການຝຶກອົບຮົມຕ່າງໆ, ໃບຜ່ານການເຮັດວຽກຜ່ານມາ (ຖ້າມີ), ສຳມະໂນຄົວ ຫລື ບັດປະຈຳຕົວ, ໃບແຈ້ງໂທດ, ໃບຂັບຂີ່ ແລະ ອື່ນໆທີ່ເຫັນວ່າຈຳເປັນ.

3. ຂໍ້ມູນເພີ່ມເຕີມ ລວມທັງຂໍ້ກໍານົດເງື່ອນໄຂການອ້າງອີງຕ່າງໆ ທ່ານສາມາດພົວພັນເອົາໄດ້ ໃນເວລາເຮັດວຽກ ນັບແຕ່ເວລາ 08:00 ໂມງ ຫາ 16:00 ໂມງ, ແຕ່ວັນຈັນ ເຖິງ ວັນສຸກ ທີ່ຫ້ອງການ ໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ , ຕັ້ງຢູ່ໃນຫ້ອງວ່າການລັດຖະບານ, ບ້ານສີສະຫວາດ, ເມືອງຈັນທະບູລີ, ນະຄອນຫລວງວຽງຈັນ, ໂທ: 021 261479.

4. ເອກະສານຍື່ນສະໝັກ ຕ້ອງສົ່ງເປັນລາຍລັກອັກສອນ ດ້ວຍຕົນເອງ ທີ່ຫ້ອງການ ໂຄງການ ປຊກ ເມືອງພູກູດ ແຂວງຊຽງຂວາງ ຫລື ສົ່ງທາງອີເມວ: info.hr@clearlaos.org ຫ້ອງການໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ ຈະພົວພັນຫາຜູ້ທີ່ຖືກຄັດເລືອກທີ່ເໝາະສົມທີ່ສຸດ ທາງອີເມວ/ວອດແອັບ ພາຍຫລັງທີ່ໄດ້ຮັບອະນຸມັດເປັນທາງການ ຈາກໂຄງການ, **ວັນທີປິດຮັບເອກະສານຍື່ນສະໝັກ ແມ່ນວັນທີ 30 ມິຖຸນາ 2026.**

ນະຄອນຫລວງວຽງຈັນ, ວັນທີ 16 ມິຖຸນາ 2026

ຮກ. ຜູ້ອໍານວຍການ

ປອ. ວົງປະພັນ ມະນີວົງ